ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຄຄຊ ວາງແຜນພັດທະນາຕະຫຼາດທຶນລາວ




ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ໄດ້ຈັດກອງປະຊຸມ ຄຄຊ ຄັ້ງທີ I ປະຈຳປີ 2021 ໃນວັນທີ 15 ກຸມພາ 2021 ທີ່ສຳນັກງານ ຄຄຊ, ນະຄອນຫຼວງວຽງຈັນ ໂດຍການໃຫ້ກຽດເປັນປະທານຂອງທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ປະທານ ຄຄຊ; ພ້ອມນີ້, ກໍ່ມີບັນດາຄະນະ ຄຄຊ ແລະ ພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມ ຄຄຊ ຄັ້ງທີ III ປີ 2020, ແຜນວຽກລະອຽດກ່ຽວກັບການຂ້າມຜ່ານສູ່ມາດຕະຖານສາກົນດ້ານການລາຍງານການເງິນ ສຳລັບຂະແໜງການຫຼັກຊັບ (IFRS Road Map), ລາຍງານການເຄື່ອນໄຫວວຽກງານຂອງ ສຄຄຊ ປະຈຳປີ 2020 ແລະ ທິດທາງແຜນການ ໃນປີ 2021 ແລະ ລາຍງານສະພາບການເຄື່ອນໄຫວຂອງຕະຫຼາດຫຼັກຊັບລາວ ປະຈຳປີ 2020 ແລະ ແຜນການໃນປີ 2021.

ທ່ານປະທານ ຄຄຊ ໄດ້ກ່າວວ່າ: ພາຍຫຼັງສຳເລັດກອງປະຊຸມ ຄຄຊ ຄັ້ງທີ III ປະຈຳປີ 2020 ພວກເຮົາໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຄຸ້ມຄອງຫຼັກຊັບຢ່າງຕັ້ງໜ້າ ໃນນັ້ນໄດ້ມີຜົນສຳເລັດອັນພົ້ນເດັ່ນ ເປັນຕົ້ນໄດ້ສຳເລັດການຄົ້ນຄວ້າສ້າງແຜນວຽກການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ສຳລັບຂະແໜງຫຼັກຊັບ (Roadmap) ເບື້ອງຕົ້ນ ແລະ ໄດ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງອຳນວຍຄວາມສະດວກໃນການຂາຍພັນທະບັດລັດຖະບານ ຊຶ່ງມີຄວາມຄືບໜ້າພໍສົມຄວນ. ແຕ່ຢ່າງໃດກໍ່ຕາມ, ຍັງຈະຕ້ອງໄດ້ສືບຕໍ່ເອົາໃຈໃສ່ຫຼາຍບັນຫາເພື່ອພັດທະນາຕະຫຼາດທຶນລາວໃຫ້ມີປະສິດທິພາບ, ມີຄວາມໜ້າເຊື່ອຖື ແລະ ມີຄວາມຟົດຟື້ນຫຼາຍຍິ່ງໆຂຶ້ນ.



# ຂ່າວ-ພາບ: ສົມອິກ ເຄນຄຳແພງ.

ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນກີບລາວ